ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະການລົງທຶນ

ເລກທີ 0165 /ກຜທ.ຮມສ-ຈສກ-9

ນະຄອນຫຼວງວຽງຈັນ, ວັນທີ 25 ມັງກອນ 2024

<u>ໜັງສືເຊີນ</u>

ຮຽນ: ..........................................................................................................

..........................................................................................., ທີ່ນັບຖືຢ່າງສູງ

**ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມໂຕະມົນ ປະຈໍາປີ 2023 ເຊິ່ງຈະຈັດຂຶ້ນໃນວັນທີ 13 ກຸມພາ 2024, ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.**

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງແຜນການ ແລະ ການລົງທຶນສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ສະບັບເລກທີ 2059/ຫສນຍ, ລົງວັນທີ 27 ຕຸລາ 2023 ກ່ຽວກັບການເຫັນດີໃຫ້ຈັດກອງປະຊຸມໂຕມົນ ປະຈໍາປີ 2023.

ກະຊວງແຜນການ ແລະການລົງທຶນ ໃນນາມຜູ້ປະຈໍາການຄະນະຊີ້ນໍາລະດັບຊາດເພື່ອຂະບວນໂຕະມົນຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມກອງປະຊຸມໂຕະມົນປະຈໍາປີ 2023 ພາຍໃຕ້ຫົວຂໍ້ "ເລັ່ງລັດ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX 2021-2025: ການທົບທວນກາງສະໄໝ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ຫຼຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ" **ທີ່ຈະໄດ້ຈັດຂຶ້ນໃນວັນທີ 13 ກຸມພາ 2024, ເວລາ 08:30-16:30 ໂມງ, ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.** ຈຸດປະສົງຂອງກອງປະຊຸມແມ່ນເພື່ອ ລາຍງານຜົນຂອງການທົບທວນກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ຍຸດທະສາດການເງິນ ແລະ ຂອບການຟື້ນຟູເສດຖະກິດ, ການທົບທວນແຫ່ງຊາດແບບສະໝັກໃຈ ແລະ ຍຸດທະສາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາແບບໂລ່ງລ່ຽນ.

ກອງປະຊຸມດັ່ງກ່າວໄດ້ຮັບກຽດເປັນປະທານໂດຍ ທ່ານ ຄໍາເຈນ ວົງໂພສີ, ລັດຖະມົນຕີ ກະຊວງແຜນການ ແລະລົງທຶນ ແລະ ທ່ານ ບັກໂຄເດັຍ ເບີຄະນ໋ອຟ (Mr. Bakhodir Burkhanov), ຜູ້ປະສານງານອົງການສະຫະປະຊາຊາດ ປະຈໍາ ສປປ ລາວ, ພ້ອມທັງມີຜູ້ເຂົ້າຮ່ວມຂັ້ນ ຮອງລັດຖະມົນຕີ, ຮອງປະທານກໍາມາທິການສະພາແຫ່ງຊາດ, ຮອງເຈົ້າແຂວງ, ຄະນະຫ້ອງການ, ຄະນະກົມຈາກບັນດາກະຊວງຂະແໜງການທີ່ກ່ຽວຂ້ອງ, ຄະນະພະແນກແຜນການ ແລະ ການລົງທຶນຈາກບັນດາແຂວງ, ບັນດາຄູ່ຮ່ວມພັດທະນາ ລວມທັງຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ສະພາການຄ້າ ແລະ ອຸດສາຫະກໍາ ພາຍໃນ ແລະຕ່າງປະເທດ ເຂົ້າຮ່ວມກອງປະຊຸມດັ່ງກ່າວ (ລາຍລະອຽດໄດ້ຂັດຕິດວາລະກອງປະຊຸມມາພ້ອມນີ້).

ລັດຖະມົນຕີ

ຄໍາເຈນ ວົງໂພສີ

<u>ໝາຍເຫດ:</u>

ເບີໂທຕິດຕໍ່

ທ. ອາລຸນສິດ ມະນີພົນ

Tel: +856 20 59999153

ນ. ລັດດາວັນ ຕຸນາລົມ

Tel: +856 20 22228428

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະການລົງທຶນ

ຫ້ອງການ

ເລກທີ 201 /ກຜທ.ຮມສ-ຈສກ-9

ນະຄອນຫຼວງວຽງຈັນ, ວັນທີ 19 ມັງກອນ 2024

**<u>ໜັງສືເຊີນ</u>**

**ຮຽນ:** ..........................................................................................................

.............................................................................................., **ທີ່ນັບຖືຢ່າງສູງ**

**ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມໂຕະມົນ ປະຈຳປີ 2023 ເຊິ່ງຈະຈັດຂຶ້ນໃນວັນທີ 13 ກຸມພາ 2024, ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 0234/ກຜທ, ລົງວັນທີ 02 ກຸມພາ 2022;
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 2059/ຫສນຍ, ລົງວັນທີ 27 ຕຸລາ 2023 ກ່ຽວກັບການເຫັນດີໃຫ້ຈັດກອງປະຊຸມໂຕມົນ ປະຈຳປີ 2023.

ຫ້ອງການ, ກະຊວງແຜນການ ແລະການລົງທຶນ ຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມກອງປະຊຸມໂຕະມົນປະຈຳປີ 2023 ພາຍໃຕ້ຫົວຂໍ້ "ເລັ່ງລັດ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX 2021-2025: ການທົບທວນກາງສະໄໝ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ຫຼຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ" **ທີ່ຈະໄດ້ຈັດຂຶ້ນໃນວັນທີ 13 ກຸມພາ 2024, ເວລາ 08:30-16:30 ໂມງ, ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.** ຈຸດປະສົງຂອງກອງປະຊຸມແມ່ນເພື່ອ ລາຍງານຜົນຂອງການທົບທວນກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ຍຸດທະສາດການເງິນ ແລະ ຂອບການຟື້ນຟູເສດຖະກິດ, ການທົບທວນແຫ່ງຊາດແບບສະໝັກໃຈ ແລະ ຍຸດທະສາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາແບບໂລ່ງລ່ຽນ.

ກອງປະຊຸມດັ່ງກ່າວໄດ້ຮັບກຽດເປັນປະທານໂດຍ ທ່ານ ຄຳເຈນ ວົງໂພສີ, ລັດຖະມົນຕີ ກະຊວງແຜນການ ແລະລົງທຶນ ແລະ ທ່ານ ບັກໂຄເດີຍ ເບີຄະນ໋ອຟ (Mr. Bakhodir Burkhanov), ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ, ພ້ອມທັງມີຜູ້ເຂົ້າຮ່ວມຂັ້ນ ຮອງລັດຖະມົນຕີ, ຮອງປະທານກຳມາທິການສະພາແຫ່ງຊາດ, ຮອງເຈົ້າແຂວງ, ຄະນະຫ້ອງການ, ຄະນະກົມຈາກບັນດາກະຊວງຂະແໜງການທີ່ກ່ຽວຂ້ອງ, ຄະນະພະແນກແຜນການ ແລະການລົງທຶນຈາກບັນດາແຂວງ, ບັນດາຄູ່ຮ່ວມພັດທະນາ ລວມທັງຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດ

ລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ສະພາການຄ້າ ແລະ ອຸດສາຫະກໍາ ພາຍໃນ ແລະຕ່າງປະເທດ ເຂົ້າຮ່ວມກອງປະຊຸມດັ່ງກ່າວ (ລາຍລະອຽດໄດ້ຂັດຕິດວາລະກອງປະຊຸມມາພ້ອມນີ້).

ຫວັງຢ່າງຍິ່ງ ທ່ານ ຄົງຈະເສຍສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ອຸຕະແກ້ວ ແກ້ວດວງສີນ

**<u>ໝາຍເຫດ:</u>**

ເບີໂທຕິດຕໍ່

ທ. ອາລຸນສິດ ມະນີພົນ

Tel: +856 20 59999153

ນ. ລັດດາວັນ ຕຸນາລົມ

Tel: +856 20 22228428

**<u>ຄຳແນະນຳເພີ່ມເຕີມ</u>**:

ສຳລັບອັດຕາກິນ ແລະ ຄ່ານ້ຳມັນໄປກັບ ຂອງຄະນະຜູ້ແທນຕ່າງແຂວງ ແມ່ນອີງຕາມຂໍ້ຕົກລົງວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ, ສະບັບເລກທີ 0200/ກງ, ລົງວັນທີ 25 ມັງກອນ 2019 ລາຍລະອຽດດັ່ງລຸ່ມນີ້:

1. ອັດຕາກິນ ແລະ ຄ່າພັກເຊົາ ທ່ານ ຮອງເຈົ້າແຂວງ
2. ອັດຕາກິນ ແລະ ຄ່າພັກເຊົາ ເລຂາທ່ານຮອງເຈົ້າແຂວງ (01 ທ່ານ)
3. ອັດຕາກິນ ແລະ ຄ່າພັກເຊົາ ທ່ານ ຫົວໜ້າພະແນກແຜນການ ແລະ ການລົງທຶນ
4. ອັດຕາກິນ ແລະ ຄ່າພັກເຊົາ ທ່ານ ຫົວໜ້າຂະແໜງຮ່ວມມືສາກົນ, ພະແນກແຜນກການ ແລະ ການລົງທຶນ
5. ອັດຕາກິນ ແລະ ຄ່າພັກເຊົາ ຄົນຂັບລົດ ທ່ານຮອງເຈົ້າແຂວງ ( 01 ທ່ານ)
6. ອັດຕາກິນ ແລະ ຄ່າພັກເຊົາ ຄົນຂັບລົດ ພະແນກແຜນການ ແລະ ການລົງທຶນ ( 01 ທ່ານ)
7. ອັດຕານ້ຳມັນລົດ ທ່ານຮອງເຈົ້າແຂວງ (01 ຄັນ)
8. ອັດຕານ້ຳມັນລົດ ພະແນກແຜນການ ແລະ ການລົງທຶນ (01 ຄັນ)